ຫ້ອງການ

ເລກທີ 936 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 23 ທັນວາ 2016

ສຳນັກງານ ຄຄຊ
ເລກທີ 1261
ວັນທີ 23 DEC 2016
ໂທລະສັບ 021 217770

# ແຈ້ງການ

**ເຖິງ** : ບັນດາທ່ານຫົວໜ້າກົມ ແລະ ທຽບເທົ່າກົມຂອງທະນາຄານແຫ່ງ ສປປ ລາວ

**ເລື່ອງ** : ການນຳໃຊ້ໜັງສືຜ່ານແດນການທູດ ແລະ ລັດຖະການ ໄປເຄື່ອນໄຫວຢູ່ຕ່າງປະເທດ

- ອີງຕາມດຳລັດວ່າດ້ວຍໜັງສືຜ່ານແດນ ສະບັບເລກທີ 259/ລບ ລົງວັນທີ 24 ສິງຫາ 2011;
- ເພື່ອປະຕິບັດຕາມລະບຽບການນຳໃຊ້ໜັງສືຜ່ານແດນໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໃນດຳລັດດັ່ງກ່າວ.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນແຈ້ງມາຍັງບັນດາທ່ານຊາບວ່າ ບັນດາທ່ານທີ່ໄດ້ຮັບການມອບໝາຍ ຫຼື ຖືກແຕ່ງຕັ້ງຈາກຂັ້ນເທິງໄປເຄື່ອນໄຫວວຽກທາງລັດຖະການຢູ່ຕ່າງປະເທດ ໃນເວລາສະແດງໜັງສືຜ່ານແດນການທູດ (ຫົວສີແດງ) ຫຼື ໜັງສືຜ່ານແດນລັດຖະການ (ຫົວສີຂຽວ) ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກ ປະຈຳດ່ານເຂົ້າ-ອອກ ສປປ ລາວ (ຈຸດກວດກາການເຂົ້າ-ອອກປະເທດ ທາງບົກ, ທາງນ້ຳ ແລະ ທາງອາກາດ) ໃຫ້ແຈ້ງເອກະສານທາງລັດຖະການ ກໍ່ຄືຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານໄປເຄື່ອນໄຫວວຽກງານຢູ່ຕ່າງປະເທດຂອງທະນາຄານແຫ່ງ ສປປ ລາວ ພ້ອມກັບໜັງສືຜ່ານແດນຂອງຕົນຕໍ່ເຈົ້າໜ້າທີ່ຕຳຫຼວດ ເພື່ອອຳນວຍຄວາມສະດວກໃຫ້ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກ ສປປ ລາວ ກວດກາຄວາມຖືກຕ້ອງຕາມວັດຖຸປະສົງໃນການນຳໃຊ້ໜັງສືຜ່ານແດນການທູດ ແລະ ລັດຖະກອນ ແລະ ເພື່ອຫຼີກເວັ້ນການນຳໃຊ້ໜັງສືຜ່ານແດນດັ່ງກ່າວ ໃນນາມສ່ວນຕົວໄປຕ່າງປະເທດ; ໃນກໍລະນີໄປຕ່າງປະເທດໃນວຽກງານສ່ວນຕົວໃຫ້ນຳໃຊ້ໜັງສືຜ່ານແດນທຳມະດາ (ຫົວສີຟ້າ) ຕາມລະບຽບການຈັດປະເພດຂອງໜັງສືຜ່ານແດນທີ່ໄດ້ວາງອອກຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການນີ້ເປັນຢ່າງດີ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ